ຂ່າວ news
BOL.ODX
ສາຂາ ທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງ ອຸດົມໄຊ
Tel: 081 260009; 212549. Fax: 081 212551
Website: www.bol.gov.la/Oudomxay/

# ພິທີ ປະກາດການປັບປຸງການຈັດຕັ້ງ ຢູ່ ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງອຸດົມໄຊ




ໃນຕອນບ່າຍຂອງວັນທີ່ 26 ພຶດສະພາ 2023 ໄດ້ມີພິທີປະກາດການປັບປຸງການຈັດຕັ້ງ ຢູ່ ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງອຸດົມໄຊ (ສາຂາ ທຫລ.ອຊ) ໂດຍການເປັນປະທານຂອງ **ທ່ານ ນ. ຂັນແກ້ວ ຫຼ້າມະນີເງີນ** ກຳມະການປະຈຳພັກ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, ມີທ່ານຫົວໜ້າກົມຈັດຕັ້ງແລະພະນັກງານ, ຮອງຫົວໜ້າຫ້ອງການ, ຮອງຜູ້ອຳນວຍການສະຖາບັນການທະນາຄານ, ຫົວໜ້າ ແລະ ຄະນະສາຂາ ທຫລ.ອຊ, ຜູ້ຕາງໜ້າສາຂາທະນາຄານທຸລະກິດອ້ອມຂ້າງແຂວງອຸດົມໄຊ ແລະ ຜູ້ຕາງໜ້າຈາກພະແນກການອ້ອມຂ້າງແຂວງຈຳນວນໜຶ່ງເຂົ້າຮ່ວມ.





ໃນພິທີດັ່ງກ່າວ **ທ່ານ ເສີມທະວີ ສີທາຝົນ** ເລຂາຄະນະພັກຮາກຖານ ສາຂາ ທຫລ.ອຊ ໄດ້ຂຶ້ນລາຍງານສະພາບການເຄື່ອນໄຫວຂອງ ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງອຸດົມໄຊ ໃນໄລຍະ 05 ເດືອນຕົ້ນປີ ແລະ ທິດທາງແຜນການວຽກງານຈຸດສຸມໃນໄລຍະ 06 ເດືອນທ້າຍປີ 2023 ເປັນຕົ້ນ: ວຽກງານການເມືອງ-ແນວຄິດ, ວຽກງານພັກ-ພະນັກງານ, ການຄຸ້ມຄອງເງິນຕາຕ່າງປະເທດ, ຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ໃນຂົງເຂດ 04 ແຂວງພາກເໜືອຕອນເທິງ ຕໍ່ ຄະນະຜູ້ອຳນວຍການ ທຫລ ກໍຄືແຂກທີ່ປະຊຸມ.






**ທ່ານ ພານຸສັກ ແກ່ນວົງພະຈັນ** ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ທະນາຄານແຫ່ງ ສປປ ລາວ ໄດ້ຜ່ານຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງພະນັກງານຄື: ຂໍ້ຕົກລົງເລກທີ 450/ທຫລ, ວ່າດ້ວຍການແຕ່ງຕັ້ງ **ທ່ານ ພອນສະຫວັນ ຄຳພາວົງ** ຮອງຫົວໜ້າ ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງອຸດົມໄຊ ຍົກຍ້າຍໄປເປັນຮອງຜູ້ອຳນວຍການສະຖາບັນການທະນາຄານ ແລະ ຂໍ້ຕົກລົງເລກທີ 451/ທຫລ, ວ່າດ້ວຍການແຕ່ງຕັ້ງ **ທ່ານ ນ. ແສງສຸລີ ອຸ່ນລາສີ** ຫົວໜ້າພະແນກບັນຊີກົມບໍລິການທະນາຄານ ທະນາຄານແຫ່ງ ສປປ ລາວ ເປັນຮອງຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງອຸດົມໄຊ.

ໂອກາດດຽວກັນນີ້, **ທ່ານ ນ. ຂັນແກ້ວ ຫຼ້າມະນີເງົາ** ກໍາມະການປະຈໍາພັກ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ໂອ້ລົມຕໍ່ກອງປະຊຸມ ໂດຍການສະແດງຄວາມເປັນຫ່ວງເປັນໄຍຕໍ່ສະພາບອັດຕາເງິນເຟີ້ ແລະ ຄວາມທ້າທາຍໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເງິນຕາຕ່າງປະເທດ ຄຽງຄູ່ກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ຕິດພັນກັບການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃຫ້ບັນລຸຕາມຈຸດປະສົງລະດັບຄາດໝາຍຂອງພັກ-ລັດກໍານົດໄວ້; ພ້ອມດຽວກັນນີ້, ຍັງໄດ້ຮຽກຮ້ອງໃຫ້ສະມາຊິກພັກ-ພະນັກງານທຸກທ່ານ ຈົ່ງມີຄວາມເຂັ້ມແຂງໜັກແໜ້ນ, ປະຕິບັດວຽກງານດ້ວຍຄວາມຮັບຜິດຊອບສູງ ເພື່ອພ້ອມກັນຜ່ານຜ່າວິກິດການທາງດ້ານການເງິນ-ເງິນຕາ ຢ່າງມີປະສິດທິພາບ.




**ພາບ-ຂ່າວໂດຍ:** ຄະນະຂໍ້ມູນ-ຂ່າວສານ ສາຂາ ທຫລ.ອຊ.

“ເສດຖະກິດລາວຈະເຂັ້ມແຂງ ຖ້າທຸກຄົນຮ່ວມແຮງນໍາໃຊ້ເງິນກີບ”